# ບົດບາດຂອງກະສິກຳຕໍ່ກັບລາຍໄດ້ ແລະ ຊັບສິນ ຂອງຊາວກະສິກອນຢູ່ບ້ານ ສະແຄະເມືອງ ໄຊເສດຖາ ແຂວງ ອັດຕະປື

**ກິຕາ ເສດທິລາດ[1], ຂັນທະລີ ພິມມະເສນ[2], ອະທິກອນ ບຸຜານຸວົງ[3], ວອນວະໄລ ອິນບຸນມີ[4]**

*ການພັດທະນາຊຸມຊົນແບບຍືນຍົງ, ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລຈຳປາສັກ*

## ບົດຄັດຫຍໍ້

ໃນການສຶກສາຄັ້ງນີ້ຜູ້ສຶກສາໄດ້ລົງເລິກເຖິງຈຸດປະສົງບົດບາດຂອງໂຄງການກະສິກຳຕໍ່ກັບລາຍໄດ້ຂອງຄົວເຮືອນຊາວກະສິກອນ ເຊິ່ງໄດ້ນຳໃຊ້ຂໍ້ມູນໄຂ່ວ ທີ່ໄດ້ເກັບກຳຂໍ້ມູນຈາກກຸ່ມຕົວຢ່າງຈຳນວນ 425 ຄົວເຮືອນໃນບ້ານສະແຄະ ເມືອງໄຊເສດຖາ ແຂວງ ອັດຕະປືໂດຍໄດ້ນຳໃຊ້ສົມຜົນຖົດຖອຍແບບພະຫຸຄູນ , ທີ່ຄາດປະມານດ້ວຍວິທີດ້ວຍວິທີກຳລັງສອງນ້ອຍສຸດ ໃນການຄາດປະມານບົດບາດຂອງໂຄງການກະສິກຳຕໍ່ກັບລາຍໄດ້ຂອງຄົວເຮືອນຊາວກະສິກອນ ເຊິ່ງຜົນການດຳເນີນການສຶກສາສາມາດສະຫຼຸບໄດ້ດັ່ງນີ້.

ຜົນການທົດສອບບົດບາດຂອງການກະສິກຳຕໍ່ກັບລາຍໄດ້ຂອງຄົວເຮືອນ ຊາວກະສິກອນ ບ້ານສະແຄະເມືອງໄຊເສດຖາ  ແຂວງ ອັດຕະປື ພົບວ່າ: ປັດໄຈທີ່ມີຜົນຕໍ່ລາຍໄດ້ຂອງຄົວເຮືອນຊາວກະສິກອນໄດ້ແກ່: ອາຍຸຂອງຫົວໜ້າຄົວເຮືອນ :ແມ່ນມີຜົນໄປທາງກົງກັນຂ້າມກັນ ເຊິ່ງເປັນໄປຕາມການຄາດຄະເນໃນເບື້ອງຕົ້ນ ດ້ວຍລະດັບຄວາມເຊື່ອໝັ້ນ 99 ສ່ວນຮ້ອຍ ລະດັບການສຶກສາສູງສຸດຂອງຄົນຄົວເຮືອນ.: ມີການພົວພັນກັນໃນທິດທາງດຽວກັນຕໍ່ກັບລາຍໄດ້ຂອງຄົວເຮືອນ ເຊິ່ງເປັນໄປຕາມສົມມຸດຖານທີ່ວາງໄວ້ອາຊີບເປັນຊາວກະສິກອນ , ຂອງຄົວເຮືອນ: ມີການພົວພັນກັນໃນທິດທາງດຽວກັນຕໍ່ກັບລາຍໄດ້ຂອງຄົວເຮືອນ ເຊິ່ງເປັນໄປຕາມສົມມຸດຖານທີ່ວາງໄວ້ ດ້ວຍລະດັບຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 99%, ຈຳນວນຄົນແຮງງານຫຼັກໃນຄົວເຮືອນທັງໝົດ: ມີການພົວພັນກັນໃນທິດທາງດຽວກັນກັບລາຍໄດ້ຂອງຄົວເຮືອນ ເຊິ່ງເປັນໄປຕາມສົມມຸດຖານທີ່ວາງໄວ້ ດ້ວຍລະດັບຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 99%  ,ເນື້ອທີ່ດິນໃນການເຮັດກະສິກຳ: ມີການພົວພັນກັນໃນທິດທາງດຽວກັນກັບລາຍໄດ້ຂອງຄົວເຮືອນ ເຊິ່ງເປັນໄປຕາມສົມມຸດຖານທີ່ວາງໄວ້ ດ້ວຍລະດັບຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 95% ຈຳນວນແຮງງານຈ້າງໃນການຜະລິດກະສິກຳ ,: ມີການພົວພັນກັນໃນທິດທາງດຽວກັນກັບລາຍໄດ້ຂອງຄົວເຮືອນ ເຊິ່ງເປັນໄປຕາມສົມມຸດຖານທີ່ວາງໄວ້ ດ້ວຍລະດັບຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 99% , ຄົວເຮືອນທີ່ລ້ຽງສັດ (ງົວ,ຄວາຍ,ແບ້,ໝູ): ມີການພົວພັນກັນໃນທິດທາງດຽວກັນກັບລາຍໄດ້ຂອງຄົວເຮືອນ ເຊິ່ງເປັນໄປຕາມສົມມຸດຖານທີ່ວາງໄວ້, ຄົວເຮືອນທີ່ລ້ຽງສັດປີກ: ມີການພົວພັນກັນໃນທິດທາງດຽວກັນກັບລາຍໄດ້ຂອງຄົວເຮືອນ ເຊິ່ງເປັນໄປຕາມສົມມຸດຖານທີ່ວາງໄວ້ ແລະ ຄົວເຮືອນທີ່ປູກພືດ: ມີການພົວພັນກັນໃນທິດທາງດຽວກັນກັບລາຍໄດ້ຂອງຄົວເຮືອນ ເຊິ່ງເປັນໄປຕາມສົມມຸດຖານທີ່ວາງໄວ້ ແຕ່ຜ່ານການທົດສອບທາງສະຖິຕິ ດ້ວຍລະດັບຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 99%

**ຄຳສັບທີ່ສຳຄັນ:** ກະສິກຳ, ລາຍໄດ້ຄົວເຮືອນ, ວິທີກຳລັງສອງນ້ອຍສຸດ

---

[1] *ກິຕາ ເສດທິລາດ, ຄະນະເສດຖະສາດ ແລະ ການຄຸ້ມຄອງ ມະຫາວິທະຍາໄລຈຳປາສັກ, ອີເມວ: ksetthilath2329@gmail.com.*

[2] *ຂັນທະລີ ພິມະເສນ, ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ ອີເມວ: khphimmasenh@gmail.com*

[3] *ອະທິກອນ ບຸບຜານຸວົງ ຄະນະເສດຖະສາດ ແລະ ການຄຸ້ມຄອງ ມະຫາວິທະຍາໄລຈຳປາສັກ ອີເມວ: Athi.bpv2018@gmail.com*

[4] *ວອນວະໄລ ອິນບຸນມີ ຄະນະເສດຖະສາດ ແລະ ການຄຸ້ມຄອງ ມະຫາວິທະຍາໄລຈຳປາສັກ ອີເມວ: vonevalay@gmail.com*

# THE ROLE OF AGRICULTURE ON HOUSEHOLD INCOME AND ASSET OF FARMERS AT SAKHE VILLAGE XAYSETTHA DISTRICT ATTAPEU PROVINCE

**Kita SETTHILATH[5], Dr Khanthaly PHIMMASEN[6], Athikone BOUPHANOUVONG[7], Vonevalay INBOUNMI[8]**

*Sustainable community development, faculty of Economic and Management, Champasack University*

## ABSTRACT

In this study, a group of students deepened the purpose of the agricultural project to the income of farmers' households using cross-section data collected from a sample group of 425 households in Saka Village, Xaysettha District, Ataphu Province, using statistical descriptive methods to compare the frequency, percentage (%), and average values using the Multiple Regression equation estimated using the Ordinary Least Squares method (Ordinary Least Square: OLS) in estimating the role of the biodiversity conservation project on the income of farmers' households in Attaphu Province. The results of the study can be summarized as follows:.

The results of the test of the role of agriculture on the income of the farmers of Sakae Village, Xaysetha District, Ataphu Province found that all the independent variables used in the model can explain the change in household income. (Prob>F>F 0.000, which is less than the statistical significance level of 0.01, indicating that the equation can be used with a statistical confidence level of 99 percent.) There is an opposite effect, which is according to the initial estimate with a confidence level of 99 percent. The highest level of education of the household (Edu2): has a relationship in the same direction with the income of the household, which is according to the hypothesis set with a statistical confidence level of 99%; the profession is a farmer of the household (Job): There is a relationship in the same direction with the household income, which is according to the hypothesis set with a statistical confidence level of 99%; the number of main workers in all households (LF): There is a relationship in the same direction with household income, which is according to the hypothesis set with a statistical confidence level of 99%. Land in agriculture (Area): There is a relationship in the same direction with household income, which is according to

[5] Kita SETTHILATH, Faculty of Economic and Management. ksetthilath2329@gmail.com.
[6] *Khanthaly PHIMMASEN, Faculty of Education, Email: khphimmasenh@gmail.com*
[7] Athikone BOUPHANOUVONG Faculty of Economic and Management Email: *Athi.bpv2018@gmail.com*
[8] Vonevalay INBOUNMI Faculty of Economic and Management Email: vonevalay@gmail.com

the hypothesis set with a statistical confidence level of 95%, the number of employed workers. In agricultural production (PL), there is a relationship in the same direction with household income, which is according to the hypothesis set with a statistical confidence level of 99%. In households that raise animals (cows, goats, and pigs), there is a relationship in the same direction with household income, which is according to the set hypothesis but through a statistical test with a statistical confidence level of 99%. Poultry households (wide): there is a relationship in the same direction with the household income, which is according to the set hypothesis, but through a statistical test with a statistical confidence level of 99%; and crop households (Crop): there is a relationship in the same direction with the household income, which is according to the set hypothesis, but through a statistical test with a statistical confidence level of 99%. Factors that do not affect the income of farmer households are the gender of the head of the household, the status of the household, and whether the household has a business.

**Keywords:** agricultural, households' income, Ordinary Least Squares

## 1. ພາກສະເໜີ

ວຽກງານກະສິກໍາ-ປ່າໄມ້ ເປັນພື້ນຖານ ເພື່ອກໍ່ສ້າງ ແລະ ຂະຫຍາຍອຸດສາຫະກໍາ, ການເຕີບໂຕທາງເສດຖະກິດຂອງປະເທດກໍາລັງພັດທະນາສ່ວນໃຫຍ່ຂຶ້ນຢູ່ກັບຜົນການດໍາເນີນງານຂອງພາກກະສິກໍາແລະບົດບາດໃນການບໍລິຫານຊັບພະຍາກອນທໍາມະຊາດ (Gylfason, 2001) ແຕ່ສ່ວນໃຫຍ່ຂອງປະເທດກໍາລັງພັດທະນາແມ່ນຄ່ອຍໆສູນເສຍຊັບພະຍາກອນທໍາມະຊາດ.ເນື່ອງຈາກໄພແຫ້ງແລ້ງ, ໄພນໍ້າຖ້ວມແລະການແຊກແຊງຂອງມະນຸດ (Mengstie, 2009).ຈານວນປະຊາກອນໂລກມີປະມານ 7.5 ຕື້ຄົນແຕ່ໃນນັ້ນ 10.9% ຍັງຂາດແຄນອາຫານທີ່ຈໍາເປັນສໍາລັບການດໍາລົງຊີວິດໂດຍຄາດວ່າທ່າອ່ຽງຂອງປະຊາກອນຍັງຈະສືບຕໍ່ເພີ່ມຂຶ້ນເພື່ອຮອງຮັບການເພີ່ມຂຶ້ນຂອງປະຊາກອນໂລກອາດຕ້ອງໄດ້ຜະລິດອາຫານເພີ່ມຂຶ້ນ.ສປປລາວ ເປັນປະເທດໜຶ່ງທີ່ມີລັກສະນະພູມີປະເທດແລະສະພາບອາກາດທີ່ອຸດົມສົມບູນເໝາະແກ່ການກະສິກໍາ.ຈາກອາດີດເນື້ອທີ່ສ່ວນໃຫຍ່ເປັນພື້ນທີ່ກະສິກໍາປະຊາກອນລາວສ່ວນໃຫຍ່ປະກອບອາຊີບກະສິກໍາຈຶ່ງນັບໄດ້ວ່າອາຊີບທາງກະສິກໍາເປັນອາຊີບທີ່ມີຄວາມສໍາຄັນຢ່າງຍິ່ງຕໍ່ກັບໂຄງສ້າງເສດຖະກິດ.ໃນຊຸມປີຜ່ານມານີ້, ປະເທດລາວເຮົາສູມໃສ່ປັບປຸງ ວິທີການລົງຊຸກຍູ້ ສ້າງຂະບວນການ ການຜະລິດ ກໍ່ຄືການສ້າງພື້ນຖານໂຄງລາງ ໄປພ້ອມໆ ກັນ ເຊິ່ງສະແດງ ອອກໃນການຜັນທຶດເອົາພະນັກງານວິຊາການລົງຮາກຖານ ຊ່ວຍແຂວງ, ເມືອງ ແລະ ບ້ານນໍາເອົາແນວພັນ ແລະ ເຕັກນິກໃຫມ່ ເພື່ອສົ່ງເສີມຊາວກະສິກອນ, ສ້າງຄອບຄົວຕົວແບບ ແນ່ໃສ່ແກ້ບັນຫາການຜະລິດສະບຽງອາຫານ ແລະ ການຜະລິດເປັນສິນຄ້າ.ໃຫ້ສໍາເລັດຜົນ. ພ້ອມດຽວກັນນັ້ນ, ກະຊວງກະສິກໍາ ແລະ ປ່າໄມ້ ພ້ອມດ້ວຍອໍາປູກອ້ອຍດການປົກຄອງຖ້ອງຖິ່ນ ກໍ່ໄດ້ຊອກຫາວິທີການແແກ້ໄຂ ແລະ ນໍາໃຊ້ບັນດາມາດຕະການໃນການປັບປຸງ ແລະ ຂະຫຍາຍ ຊົນລະປະທານ ດ້ວຍການປູກອ້ອຍ ເພື່ອຕ້ານໄພແລ້ງ, ຕ້ານນໍ້າຖ້ວມ, ຊຸກຍູ້ການຜະລິດຂອງ ປະຊາຊົນໃຫ້ມີການຂະຫຍາຍຕົວດ້ວຍການສົ່ງເສີມເຮັດກະເສດສຸມຂະຫຍາຍໂຄງລາງພື້ນຖານ ວັດຖຸເຕັກນິກ, ການກໍ່ສ້າງສູນ, ສະຖານີ ຂະຫຍາຍພັນພືດ, ພັນສັດໂຮງງານເມັດພັນ, ໂຮງງານອາຫານສັດ, ໂຮງງານຝຸ່ນຊີວະພາບ ປາ ແລະ ແນວພັນໄມ້ອຸດສາຫະກໍາຂະຫຍາຍກໍາ ລັງການຜະລິດ ດ້ວຍວິທີນໍາໃຊ້ກົນຈັກ ເຮັດໃຫ້ຜົນຜະລິດກາຍເປັນສິນຄ້າ ຮັບໃຊ້ພາຍໃນ ແລະ ສົ່ງອອກ.ໄປຄຽງຄູ່ກັນໄປນັ້ນ, ດ້ານຄຸ້ມຄອງມະຫາພາກ ໃນການພັດທະນາກະສິກໍາ-ປ່າໄມ້ພວກເຮົາໄດ້ອອກແຮງຄົ້ນຄວ້າ ແລະ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ສ້າງ ລະບົບກົດໝາຍເພື່ອຄຸ້ມຄອງວຽກງານອອກເປັນແຕ່ລະໄລຍະ. ມາຮອດປະຈຸບັນ ມີກົດໝາຍຈໍານວນ 4 ສະບັບຄື: ກົດໝາຍວ່າດ້ວຍກະສິກໍາ. (Maf.gov.la: 2016) ແຂວງ ອັດຕະປື ແມ່ນແຂວງໜຶ່ງທີ່ມີການພັດທະນາທາງດ້ານເສດຖະກິດ ເນື່ອງຈາກແຂວງ ອັດຕະປືແມ່ນອຸດົມສົມບູນໄປດ້ວຍຊັບພະ ຍາກອນທໍາມະຊາດ ແລະ ມີການຜະລິດພືດຜົນທາງດ້ານກະສິກໍາເປັນຫລັກ, ຂະແໜງກະສິກໍາແມ່ນຂະແໜງໜຶ່ງທີ່ມີບົດບາດຄວາມສໍາຄັນຫຼາຍໃນການຈັດຕັ້ງຜັນຂະຫຍາຍແນວທາງ ນະໂຍບາຍຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ ກ່ຽວກັບກະສິກໍາ, ພາຍຫລັງທີ່ໄດ້ຮັບການປົດປ່ອຍປະເທດຊາດ ແລະ ສ້າງຕັ້ງພັກເປັນ ສປປລ ເປັນຕົ້ນມາ, ພັກ ແລະ ລັດຖະບານໄດ້ຊຸມໃສ່ວຽກງານກະສິກໍາເປັນວຽກງາທີ່ສໍາຄັນ ເຊິ່ງສະແດງອອກໃນມະຕິຕ່າງໆຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ, ພົ້ນເດັ່ນທີ່ສຸດແມ່ນພາຍຫຼັງພັກເຮົາໄດກໍານົດແນວທາງປ່ຽນແປງໃໝ່ເປັນຕົ້ນມາ, ເຊິ່ງພັກເຮົາໄດ້ກໍາເອົາວຽກງານກະສິກໍາເປັນສະໜາມລົບອັນດັບໜຶ່ງ ແລະ ກໍານົດແນວທາງ ຫັນເອົາເສດຖະກິດທໍາມະຊາດໄປສູ່ເສດຖະກິດການຄ້າ (ກະຊວງກະສິກາ ແລະ ປ່າໄມ້ 2015) ແລະ ເປັນແຂວງໜຶ່ງທີມີເນື້ອທີທໍາການຜະລິດອຸດົມສົມບູນ

ເພາະສາມາດຕອບສະໜອງສິນຄ້າກະສິກຳໄດ້ຫຼາຍ ສົມຄວນ ເປັນຕົ້ນແມ່ນເຂົ້າ,ສາລີ,ພືດລະດູແລງ ແລະ ລະດູຝົນ,ສຳລັບການຜະລິດເຂົ້າປູກອ້ອຍປີ ມີເນື້ອທີ່ປະມານ 50,000 ຮຕ ,ເຊິ່ງໄດ້ຮັບຜົນຜະລິດ 211,000 ຕ ເຂົ້າປູກອ້ອຍແຊງມີເນື້ອທີ່ 12,200 ຮຕ ,ເປົ້າໝາຍການປູກພືດເປັນສິນຄ້າມີພືດລະດູແລ້ງ ແລະ ລະດູຝົນ. ພືດລະດູແລ້ງແມ່ເຫັນວ່າມີການປູກເປັນຂະບວນການຢ່າງກ້ວາງຂວາງ ພໍສົມຄວນ ເພາະປະຊາຊົນໄດ້ເອົາໃຈໃສ່ ສຸ່ມໃສປູກພືດເປັນສິນຄ້າຫຼາຍຊະນິດເຊັ່ນ: ສາລີ, ພືດຕະກູນຖົ່ວ, ໝາກໂມ, ໝາກແຕງ ແລະ ພືດຜັກຕ່າງໆ.ຄຽງຄູ່ກັບທ່າອ່ຽງຂອງການເປີດເສລີການຄ້າ, ການສົ່ງອອກຜະລິດຕະພັນດ້ານກະສິກຳສາມາດນຳເອົາແຫຼ່ງລາຍຮັບທີ່ສຳຄັນມາໃຫ້ແກ່ປະເທດຕ່າງໆ ໂດຍສະເພາະແມ່ນປະເທດທີ່ກຳລັງພັດທະນາ. ອັດຕາສ່ວນຂອງຜູ້ທຸກ ຍາກສ່ວນໃຫ່ຍແມ່ນອີງໃສ່ການກະສິກຳເປັນຫຼັກ ແລະ ການຂະຫຍາຍຕົວທາງດ້ານກະສິກຳສາມາດເປັນກຸນແຈ ສຳຄັນຕໍ່ການເພີ່ມຂຶ້ນຂອງຄວາມທຸກຍາກ ແລະ ການຫຼຸດຜ່ອນຄວາມທຸກຍາກ (Guyen, 2010). ຈາກມູມມອງເລື່ອງການລຶບລ້າງຄວາມທຸກຍາກ ຈຸດປະສົງທີ່ສຳຄັນທີ່ສຸດທີ່ກ່ຽວຂ້ອງກັບນະໂຍບາຍການ ພັດທະນາກະສິກຳແມ່ນການປັບປຸງຄວາມໝັ້ນຄົງດ້ານສະບຽງອາຫານຂອງຄົວເຮືອນ. ການປະກອບສ່ວນເຂົ້າ ໃນຈຸດປະສົງດັ່ງກ່າວນີ້ ແລະ ການປັບປຸງລະດັບຊີວິດການເປັນຢູ່ທີ່ດີຂຶ້ນໂດຍທົ່ວໄປ ຈະເຮັດໃຫ້ການກະສິກຳທີ່ ອີງໃສ່ຕະຫຼາດໄດ້ຮັບການປັບປຸງ, ຄວາມບໍ່ສົມດຸນລະຫວ່າງການປູກຝັງເຂດທົ່ງພຽງ ແລະ ເປີ້ນພູຫຼຸດລົງ (ຍຸດທະ ສາດການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ສປປ ລາວ, 2013)ບູລິມະສິດອັນດັບໜຶ່ງ ຂອງລັດຖະບານ ແຫ່ງ ສປປລາວ ແມ່ນການຫັນເປັນກະສິກຳທີ່ທັນສະໄໝ ຂອງ ຂະແໜງກະສິກຳໃນລັກສະນະທີ່ສອດຄ່ອງກັບແນວທາງການປະຕິບັດແບບຍືນຍົງເຕັມສ່ວນ ແລະ ສາມາດບັນລຸ ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ຊີວິດການເປັນຢູ່ທີ່ດີຂຶ້ນຂອງປະຊາຊົນລາວທຸກຄົນ, ເປົ້າໝາຍຂອງ ການລຶບລ້າງຄວາມທຸກຍາກ ແລະ ການຫຼຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາໃນປີ 2018 ແມ່ນຂຶ້ນກັບຂະແໜງການກະສິກຳທີ່ມີປະສິດທິຜົນຫຼາຍຂຶ້ນ. ການກະສິກຳເປັນພື້ນຖານໃຫ້ແກ່ ການພັດທະນາເສດຖະກິດ, ສັງຄົມ ແລະ ວັດທະນະທຳ ສຳລັບປະຊາກອນຫຼາຍກວ່າ 80% ຂອງປະຊາກອນທັງໝົດ ແລະ ກວມ ເອົາຫຼາຍກວ່າ 50% ຂອງ GDP (ຍຸດທະສາດການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ສປປ 210, 2013)

## 2. ຈຸດປະສົງ

- ສຶກສາເຖິງບົດບາດຂອງກະສິກຳຕໍ່ກັບລາຍໄດ້ຂອງຊາວກະສິກອນຂອງຊາວກະສິກອນຢູ່ ບ້ານ ສະແຄະ ເມືອງ ໄຊເສດຖາ ແຂວງ ອັດຕະປື.
- ສຶກສາເຖິງບົດບາດຂອງກະສິກຳຕໍ່ກັບຊັບສິນໄດ້ຂອງຊາວກະສິກອນຂອງຊາວກະສິກອນຢູ່ ບ້ານ ສະແຄະ ເມືອງ ໄຊເສດຖາ ແຂວງ ອັດຕະປື.

## 3. ວິທີການຄົ້ນຄວ້າ

3.1. ການອອກແບບການສຶກສາ

ສຳລັບການສຶກສາກ່ຽວກັບບົດບາດຂອງກະສິກຳຕໍ່ການລາຍໄດ້ ຂອງຊາວກະສິກອນຢູ່ບ້ານ ສະແຄະ ເມືອງ ໄຊເສດຖາ ແຂວງ ອັດຕະປື. ແມ່ນມີການກຳນົດພື້ນທີ່ ແລະ ໄລຍະເວລາການຄົ້ນຄວ້າ

3.2. ກຸ່ມປະຊາກອນກຸ່ມຕົວຢ່າງ

ໃນການສຶກສາຄັ້ງນີ້ເປັນການສຶກສາບົດບາດຂອງກະສິກຳຕໍ່ກັລາຍໄດ້ ຂອງຊາວກະສິກອນຢູ່ບ້ານ ສະແຄະ ເມືອງ ໄຊເສດຖາ ແຂວງ ອັດຕະປື. ອີງຕາມການເກັບຂໍ້ມູນສະຖິຕິຢູ່ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ໄຊສດຖາ ມີທັງໝົດ 26 ບ້ານ, ແບ່ງອອກເປັນ 7 ກຸ່ມ ແຕ່ລະກຸ່ມກໍ່ໄດ້ມີການເຮັດນາ ຫຼື ເຮັດການກະສິກຳ ແລະ ສັງເກດເຫັນວ່າ:ບ້ານສະແຄະ ແມ່ນກຸ່ມທີ່ມີ ການເຮັດການກະສິກຳຫຼາຍກວ່າ

ກຸ່ມອື່ນ (ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ໄຊເສດຖາ ແຂວງອັດຕະປື,2021).

ສຳລັບກຸ່ມປະຊາກອນທີ່ເລືອກເຂົ້າໃນການສຶກສາຄັ້ງນີ້ແມ່ນມີຈຳນວນ ມີທັງໝົດ 582 ຄົວເຮືອນ.ສຸ່ມກຸ່ມຕົວຢ່າງໃນການສຶກສາຄັ້ງນີ້ແມ່ນມີທັງໝົດ 425 ຄົວເຮືອນ.

### 3.3 ເຄື່ອງມືທີ່ໃຊ້ເຂົ້າໃນການເກັບກຳຂໍ້ມູນ

ເຄື່ອງມືທີ່ໃຊ້ເຂົ້າໃນການເກັບຂໍ້ມູນໃນຄັ້ງນີ້ແມ່ນໄດ້ໃຊ້ແບບສອບຖາມ (Questionaire) ໃນການເກັບກຳລວບລວມຂໍ້ມູນເຊິ່ງແບບສອບຖາມເພື່ອໃຫ້ຕອບຕາມຈຸດປະສົງທີ່ວາງໄວ້, ແຕ່ລະຊຸດແບ່ງອອກເປັນ 3 ພາກສ່ວນຄື: ສ່ວນທີ1 ແມ່ນໄດ້ສອບຖາມກ່ຽວກັບຂໍ້ມູນທົ່ວໄປຂອງຄົວເຮືອນໃນນັ້ນໄດ້ປະກອບມີການສອບຖາມກ່ຽວກັບເພດ, ອາຍຸ,ການສຶກສາ, ອາຊີບ,ຈຳນວນສະມາຊິກ,ລາຍໄດ້. ສ່ວນທີ 2 ແມ່ນໄດ້ສອບຖາມກ່ຽວກັບສະພາບການຜະລິດກະສິກຳຂອງປະຊາຊົນເປັນຕົ້ນແມ່ນຕົ້ນທຶນ, ທີ່ດິນ, ແຮງງານ,ເງິນທຶນທີ່ໃຊ້ໃນການຜະລິດກະສິກຳ,ສະພາບດິນແລະອື່ນໆ.

ສ່ວນສຸດທ້າຍແມ່ນໄດ້ສອບຖາມກ່ຽວກັບສິ່ງທີ່ຕ້ອງການຢາກໃຫ້ພາກລັດເຂົ້າມາສະໜັບສະໜູນຊ່ວຍເຫຼືອ.

### 3.4 ວິທີການວິເຄາະຂໍ້ມູນ ແລະ ແປຜົນ

ການວິເຄາະຂໍ້ມູນໂດຍນຳໃຊ້ສະຖິຕິພັນລະນາໃນການວິເຄາະຂໍ້ມູນໂດຍນຳໃຊ້ສະຖິຕິພັນລະນາແມ່ນຈະໃຊ້ເພື່ອວິເຄາະຂໍ້ມູນກ່ຽວກັບລັກສະນະທົ່ວໄປຂອງຄົວເຮືອນ ໂດຍຊອກຫາຄ່າສະເລ່ຍ (Means), ຄ່າສ່ວນຮ້ອຍ (Percentage), ຄ່າຄວາມຖີ່ (Frequencies), ຄ່າຕ່ຳສຸດ (Minimum) ແລະ ຄ່າສູງສຸດ (Maximum). ການວິເຄາະຂໍ້ມູນກ່ຽວກັບຄວາມຕ້ອງການຢາກໃຫ້ໜ່ວຍງານທີ່ກ່ຽວຂ້ອງເຂົ້າມາຊ່ວຍເຫຼືອແມ່ນນຳໃຊ້ຄ່າສ່ວນຮ້ອຍ (Percentage) ແລະຄ່າຄວາມຖີ່ (Frequencies).

ການວິເຄາະຂໍ້ມູນໂດຍນາໃຊ້ສະຖິຕິອ້າງອີງ ໃນການວິເຄາະ ເຊິ່ງປະກອບດ້ວຍ 2 ຈຸດປະສົງ ຄືສຶກສາເຖິງບົດບາດຂອງກະສິກຳຕໍ່ກັບລາຍໄດ້ຂອງຊາວກະສິກອນ ແລະ ສຶກສາເຖິງບັນຫາແລະອຸປະສັກຂອງຊາວກະສິກອນບ້ານ ສະແຄະ ເມືອງ ໄຊເສດຖາ ແຂວງ ອັດຕະປື.ດັ່ງນັ້ນ ເຮົາມີການວິເຄາະຢູ່ 2 ຮູບແບບຄື

ການວິເຄາະບົດບາດຂອງກະສິກຳຕໍ່ກັບລາຍໄດ້ ແລະ ຊັບສິນຂອງຊາວກະສິກອນຂອງຊາວກະສິກອນຢູ່ ບ້ານມ ສະແຄະ ເມືອງ ໄຊເສດຖາ ແຂວງ ອັດຕະປື ເຊິ່ງໃຊ້ແບບຈຳລອງ Multiple regression Model ເຂົ້າໃນການວິເຄາະ. ເນື່ອງຈາກວ່າຕົວປ່ຽນຕາມທີ່ຈະໃຊ້ເຂົ້າໃນການວິເຄາະເປັນຕົວປ່ຽນແບບປະລິມານ. ສຳລັບການຄາດປະມານ (Estimation) ໃນແບບຈຳລອງ (Model) ແມ່ນນຳໃຊ້ຂໍ້ມູນໄຂວ່ (Cross section data) ເຂົ້າໃນການສຶກສາ ສ່ວນໃຫຍ່ມັກຈະພົບບັນຫາທາງເສດຖາມິຕິ (Econometric problems) ເປັນຕົ້ນແມ່ນ: ບັນຫາພະຫຸສຳພັນ (Multicollinearity) ແລະ ບັນຫາສະຫະສຳພັນ (Heteroskedasticity). ບັນຫາພະຫຸສຳພັນ (Multicollinearity): ເປັນບັນຫາທີ່ສຳຄັນ ແລະ ບໍ່ຄວນເບິ່ງຂ້າມໃນການຄຳນວນສົມຜົນຖົດຖອຍດ້ວຍວິທີ OLS. ຖ້າວ່າຄ່າສຳປະສິດຂອງຄູ່ຕົວປ່ຽນອິດສະຫຼະມີການພົວພັນກັນສູງໃນລະດັບ 0.80 ຂຶ້ນໄປ ແມ່ນເກີດບັນຫາພະຫຸສຳພັນ (Gujati, 2009), ມັນຈະສົ່ງຜົນກະທົບຕໍ່ຄວາມບໍ່ຖືກຕ້ອງຂອງການຄາດປະມານເຊິ່ງເປັນການລະເມີດຂໍ້ສົມມຸດຖານຂອງສົມຜົນຖົດຖອຍ Classical Assumption of Linear Regression) ດ້ວຍວິທີ OLS, ພົບວ່າ ແບບ

ຈຳລອງທີ່ເຮົາກຳລັງຄາດປະມານຄ່າຢູ່ນັ້ນ ຫາກມີຕົວປ່ຽນອິດສະຫຼະສຳພັນກັນໃນລະດັບ 0.80 ຂຶ້ນໄປ ຄວນຫຼຸດລະດັບບັນຫາດັ່ງກ່າວດ້ວຍຫຼາຍວິທີຄື:

ເພີ່ມຈຳນວນຂໍ້ມູນທີ່ໃຊ້ໃນການຄາດປະມານ ເພາະຂໍ້ມູນທີ່ເກັບມາເພີ່ມຂຶ້ນນັ້ນອາດເປັນຂໍ້ມູນທີ່ເຮັດໃຫ້ຄ່າສຳປະສິດຂອງຄູ່ຕົວປ່ຽນອິດສະຫຼະມີຄວາມສຳພັນກັນຫຼຸດລົງ.

ສ້າງຕົວປ່ຽນອິດສະຫຼະຂຶ້ນໃໝ່ ໂດຍໄດ້ຈາກການປະກອບກັນຂອງຄູ່ຕົວປ່ຽນອິດສະຫຼະທີ່ມີຄວາມສຳພັນກັນສູງເຊິ່ງ ເອີ້ນວ່າ: Interaction From.

ຕັດຕົວປ່ຽນອິດສະຫຼະຕົວໃດໜຶ່ງ ທີ່ພົບວ່າມີບັນຫາພະຫຸສຳພັນອອກຈາກແບບຈຳລອງແຕ່ຕ້ອງໝັ້ນໃຈວ່າ ຕົວປ່ຽນອິດສະລະທີ່ຖືກຕັດອອກໄປນັ້ນຕ້ອງບໍ່ມີອິດທິພົນຕໍ່ຕົວປ່ຽນຕາມ ບໍ່ສະນັ້ນຈະເກີດບັນຫາໃຫຍ່ຂຶ້ນຄື: ເກີດບັນຫາແບບຈຳລອງຜິດພາດ.

ບັນຫາສະຫະສຳພັນ (Heteroskdasticity): ແມ່ນຄ່າຜັນປ່ຽນຂອງຄ່າຜິດດ່ຽງທີ່ມີເງື່ອນໄຂເກີດຂຶ້ນກັບຕົວປ່ຽນອິດສະຫຼະທີ່ບໍ່ຄົງທີ່ໃນແຕ່ລະກຸ່ມປະຊາກອນ ຫຼື ເວົ້າອີກຢ່າງໜຶ່ງວ່າບໍ່ສາມາດຢັ້ງຢືນຄ່າຜັນປ່ຽນຄົງທີ່ (Heteroskdasticity) ເຊິ່ງເປັນການລະເມີດຂໍ້ສົມມຸດຖານໃນການນຳໃຊ້ OLS ໃນການປະເມີນສົມຜົນທາງເສດຖາມິຕິ, ເຮັດໃຫ້ການຄາດປະມານບໍ່ມີປະສິດທິພາບ (Infficiency) ໝາຍຄວາມວ່າ: ຈະເກີດຄວາມບິດເບືອນສຳລັບຄ່າຜັນປ່ຽນທີ່ໄດ້ຂອງສົມຜົນຖົດຖອຍ, ຈະເຮັດໃຫ້ການທົດສອບສົມມຸດຖານດ້ວຍ T-Statistic ແລະ F-Statistic ບໍ່ເປັນໄປຕາມການແຈກຢາຍ T ແລະ F ທົ່ວໄປ, ໃນການທົດສອບບັນຫາພະຫຸສຳພັນສາມາດເຮັດໄດ້ໂດຍການໃຊ້ສົມມຸດຖານກ່ຽວກັບຄ່າຜັນປ່ຽນ ສົມມຸດຖານຄົງທີ່ຄື: ຖ້າວ່າຜົນການທົດສອບຫາກປະຕິເສດ ຫຼື ບໍ່ສາມາດຢັ້ງຢືນຄ່າຜັນປ່ຽນຄົງທີ່ (Heteroskdasticity) ກໍ່ໝາຍຄວາມວ່າເກີດບັນຫາພະຫຸສຳພັນ Heteroskdasticity (Greece, 2000).

**4. ຜົນໄດ້ຮັບ**

ຜົນການທົດສອບປັດບາດຂອງການກະສິກຳຕໍ່ກັບລາຍໄດ້ຂອງຄົວເຮືອນ ຊາວກະສິກອນ ບ້ານສະແຄະ ເມືອງໄຊເສດຖາ ແຂວງ ອັດຕະປື ພົບວ່າ: ຕົວປ່ຽນອິດສະຫຼະທຸກຕົວທີ່ໃຊ້ໃນແບບຈຳລອງສາມາດອະທິບາຍການປ່ຽນແປງຂອງລາຍໄດ້ຂອງຄົວເຮືອນ, Prob>F = 0.000 ເຊິ່ງໜ້ອຍກວ່າລະດັບຄວາມສຳຄັນທາງສະຖິຕິທີ່ລະດັບ 0.01 ສະແດງວ່າ ສົມຜົນດັ່ງກ່າວສາມາດນຳໃຊ້ໄດ້ດ້ວຍລະດັບຄວາມເຊື່ອໝັ້ນທາງສະຖິຕິ 99 ສ່ວນຮ້ອຍ ເມື່ອພິຈາລະນາລາຍລະອຽດຂອງແຕ່ລະປັດໄຈພົບວ່າ: ປັດໄຈທີ່ມີຜົນຕໍ່ລາຍໄດ້ຂອງຄົວເຮືອນຊາວກະສິກອນໄດ້ ເຊິ່ງມີລາຍລະອຽດດັ່ງນີ້:

ເພດຂອງຫົວໜ້າຄົວເຮືອນ (Gender): ມີການພົວພັນກັນໃນທິດທາງກົງກັນຂ້າມກັບລາຍໄດ້ຂອງຄົວເຮືອນ ສະຖານະພາບແຕາງງານຂອງຫົວໜ້າຄົວເຮືອນ (Status): ມີການພົວພັນກັນໃນທິດທາງກົງກັນຂ້າມກັບລາຍໄດ້ຂອງຄົວເຮືອນ, ອາຍຸຂອງຫົວໜ້າຄົວເຮືອນ (AGE): ແມ່ນມີຜົນໄປທາງກົງກັນຂ້າມກັນ ເຊິ່ງເປັນໄປຕາມການຄາດຄະເນໃນເບື້ອງຕົ້ນ, ລະດັບການສຶກສາສູງສຸດຂອງຄົນຄົວເຮືອນ (Edu2): ມີການພົວພັນກັນໃນທິດທາງດຽວກັນຕໍ່ກັບລາຍໄດ້ຂອງຄົວເຮືອນ , ອາຊີບເປັນຊາວກະສິກອນຂອງຄົນຄົວເຮືອນ (Job): ມີການພົວພັນກັນໃນທິດທາງດຽວກັນຕໍ່ກັບລາຍໄດ້ຂອງຄົວເຮືອນ , ຈຳນວນຄົນແຮງງານຫຼັກໃນຄົວເຮືອນທັງໝົດ (LF): ມີການພົວພັນກັນໃນທິດທາງດຽວກັນກັບລາຍໄດ້, ເນື້ອທີ່ດິນໃນການເຮັດກະສິກຳ (Area): ມີການພົວພັນກັນໃນທິດທາງດຽວກັນກັບລາຍໄດ້ຂອງຄົວເຮືອນ , ຈຳນວນແຮງງານຈ້າງໃນການ

ຜະລິດກະສິກຳ (PL): ມີການພົວພັນກັນໃນທິດທາງດຽວກັນກັບລາຍໄດ້ຂອງຄົວເຮືອນ, ຄົວເຮືອນທີ່ລ້ຽງສັດ(ງົວ,ຄວາຍ,ແບ້,ໝູ) (Cattle): ມີການພົວພັນກັນໃນທິດທາງດຽວກັນກັບລາຍໄດ້ຂອງຄົວເຮືອນ, ຄົວເຮືອນທີ່ປູກພືດ (Crop): ມີການພົວພັນກັນໃນທິດທາງດຽວກັນກັບລາຍໄດ້ຂອງຄົວເຮືອນ ເຊິ່ງເປັນໄປຕາມສົມມຸດຖານທີ່ວາງໄວ້ ,

ດ້ານປັດໄຈທີ່ມີຜົນຕໍ່ການອອກນີຄື: ເພດຂອງຫົວໜ້າຄົວເຮືອນ (Gender) ,ສະຖານະພາບຂອງຫົວໜ້າຄົວເຮືອນ (Statu), ອາຍຸຂອງຫົວໜ້າຄົວເຮືອນ (AGE), ລະດັບການສຶກສາສູງສຸດຂອງຄົນຄົວເຮືອນ (Edu2), ອາຊີບເປັນຊາວກະສິກອນຂອງຄົນຄົວເຮືອນ (Job), ຈຳນວນຄົນແຮງງານຫຼັກໃນຄົວເຮືອນທັງໝົດ (LF), ເນື້ອທີ່ດິນໃນການເຮັດກະສິກຳ (Area), ຈຳນວນແຮງງານຈ້າງໃນການຜະລິດກະສິກຳ (PL)

**5. ວິພາກຜົນ**

ປັດໄຈທີ່ມີຜົນຕໍ່ລາຍໄດ້ຂອງຄົວເຮືອນຊາວກະສິກອນໄດ້ ເຊິ່ງມີລາຍລະອຽດດັ່ງນີ້: ເພດຂອງຫົວໜ້າຄົວເຮືອນ (Gender): ມີການພົວພັນກັນໃນທິດທາງກົງກັນຂ້າມກັບລາຍໄດ້ຂອງຄົວເຮືອນ ເຊິ່ງບໍ່ເປັນໄປຕາມສົມມຸດຖານທີ່ວາງໄວ້ ແລະ ມີລະດັບຄວາມເຊື່ອໝັ້ນທາງສະຖິຕິໃນລະດັບຕໍ່າກວ່າ 90% ໝາຍຄວາມວ່າ: ຖ້າຫົວໜ້າຄົວເຮືອນໃດຫາກເປັນເພດຊາຍ ຫຼື ເພດຍິງກໍ່ບໍ່ມີຜົນ ຕໍ່ລາຍໄດ້ຂອງຄົວເຮືອນຂອງຊາວກະສິກອນ. ສະຖານະພາບແຕ່ງງານຂອງຫົວໜ້າຄົວເຮືອນ (Status): ມີການພົວພັນກັນໃນທິດທາງກົງກັນຂ້າມກັບລາຍໄດ້ຂອງຄົວເຮືອນ ເຊິ່ງບໍ່ເປັນໄປຕາມສົມມຸດຖານທີ່ວາງໄວ້ ແລະ ມີລະດັບຄວາມເຊື່ອໝັ້ນທາງສະຖິຕິໃນລະດັບຕໍ່າກວ່າ 90% ໝາຍຄວາມວ່າ: ຖ້າຫົວໜ້າຄົວເຮືອນໃດຫາກສະຖານະພາບຈະເປັນແບບໃດ ເຊັ່ນ:ບໍ່ວ່າຈະໂສດ ຫຼື ແຕ່ງງານ ກໍ່ລ້ວນແລ້ວບໍ່ມີຜົນ ຕໍ່ລາຍໄດ້ຂອງຄົວເຮືອນຂອງເຂົາເຈົ້າ. ອາຍຸຂອງຫົວໜ້າຄົວເຮືອນ (AGE): ແມ່ນມີຜົນໄປທາງກົງກັນຂ້າມກັນເຊິ່ງເປັນໄປຕາມການຄາດຄະເນໃນເບື້ອງຕົ້ນ ດ້ວຍລະດັບຄວາມເຊື່ອໝັ້ນ 99 ສ່ວນຮ້ອຍ ເຫັນວ່າ: ອາຍຸຂອງຫົວໜ້າຄົວເຮືອນ ແມ່ນມີຄວາມສຳພັນທາງສະຖິຕິ. ໝາຍຄວາມວ່າ: ຖ້າຫາກວ່າອາຍຸຂອງຫົວໜ້າຄົວເຮືອນເພີ່ມຂຶ້ນ 1 ປີ ອາດເຮັດໃຫ້ລາຍໄດ້ຂອງຄົວເຮືອນເພີ່ມຂຶ້ນ 0.61 ສ່ວນຮ້ອຍ. ນັ້ນໝາຍຄວາມວ່າເມື່ອອາຍຸຂອງຫົວໜ້າຄົວເຮືອນເພີ່ມຂຶ້ນເທົ່າໃດກໍ່ໃຫ້ເຮັດມີຄວາມຊຳນິຊຳນານໃນການທຳການຜະລິດ ແລະ ສ້າງຊ່ອງທາງການສ້າງລາຍໄດ້ໄດ້ດີເພີ່ມຂຶ້ນເທົ່ານັ້ນ. ລະດັບການສຶກສາສູງສຸດຂອງຄົນຄົວເຮືອນ (Edu2): ມີການພົວພັນກັນໃນທິດທາງດຽວກັນຕໍ່ກັບລາຍໄດ້ຂອງຄົວເຮືອນ ເຊິ່ງເປັນໄປຕາມສົມມຸດຖານທີ່ວາງໄວ້ ດ້ວຍລະດັບຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 99% ສົມມຸດກຳນົດໃຫ້ປັດໄຈອື່ນໆນອກເໜືອຈາກລະດັບການສຶກສານັ້ນ ຖ້າຫົວໜ້າຄົວເຮືອນໃດມີລະດັບການສຶກສາໃນຄົວເຮືອນທີ່ຈົບມັດທະຍົມຂຶ້ນໄປ ຈະມີໂອກາດເຮັດໃຫ້ລາຍໄດ້ຂອງຄົວເຮືອນເພີ່ມຂຶ້ນເທົ່າກັບ 0.0264 ຫຼື 2.64% ອາດຈະເປັນຍ້ອນຫົວໜ້າຄົວເຮືອນທີ່ມີລະດັບການສຶກສາສູງຂຶ້ນເທົ່າໃດ ຍິ່ງມີຄວາມຮູ້ຄວາມສາມາດສູງກວ່າ ສາມາດສ້າງລາຍໄດ້ຂອງຄົວເຮືອນ ໃນການທຳການຜະລິດກະສິກຳ ເຮັດໃຫ້ມີລາຍໄດ້ຂອງຄົວເຮືອນຕໍ່າກ່ວາ ຫົວໜ້າຄົວເຮືອນທີ່ມີລະດັບການສຶກສາຕໍ່າກ່ວາ. ອາຊີບເປັນຊາວກະສິກອນຂອງຄົນຄົວເຮືອນ (Job): ມີການພົວພັນກັນໃນທິດທາງດຽວກັນຕໍ່ກັບລາຍໄດ້ຂອງຄົວເຮືອນ ເຊິ່ງເປັນໄປຕາມສົມມຸດຖານທີ່ວາງໄວ້ ດ້ວຍລະດັບຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 99% ສົມມຸດກຳນົດໃຫ້ປັດໄຈອື່ນໆນອກເໜືອຈາກອາຊີບຊາວ

ກະສິກອນ ນັ້ນ ຖ້າຫົວໜ້າຄົວເຮືອນໃດມີອາຊີບຊາວກະສິກອນ ຈະມີໂອກາດເຮັດໃຫ້ລາຍໄດ້ຂອງຄົວເຮືອນເພີ່ມຂຶ້ນເທົ່າກັບ 0.1767 ຫຼື 17.67% ອາດຈະເປັນຍ້ອນຫົວໜ້າຄົວເຮືອນທີ່ມີອາຊີບຊາວກະສິກອນ ຍິ່ງມີຄວາມສາມາດສ້າງລາຍໄດ້ຂອງຄົວເຮືອນ ໃນການທຳການຜະລິດກະສິກຳ ເຮັດໃຫ້ມີລາຍໄດ້ຂອງຄົວເຮືອນສູງກ່ວາ ຫົວໜ້າຄົວເຮືອນທີ່ມີບໍ່ປະກອບອາຊີບການກະສິກຳ. ຈຳນວນຄົນແຮງງານຫຼັກໃນຄົວເຮືອນທັງໝົດ (LF): ມີການພົວພັນກັນໃນທິດທາງດຽວກັນກັບລາຍໄດ້ຂອງຄົວເຮືອນ ເຊິ່ງເປັນໄປຕາມສົມມຸດຖານທີ່ວາງໄວ້ ດ້ວຍລະດັບຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 99% ໝາຍຄວາມວ່າ: ເມື່ອຈຳນວນແຮງງານຫຼັກ ໃນຄົວເຮືອນທັງໝົດເພີ່ມຂຶ້ນ 1 ຄົນ ຈະເຮັດໃຫ້ລາຍໄດ້ຂອງຄົວເຮືອນເພີ່ມຂຶ້ນ 0.0264 ຫຼື 2.64 % ອາດຈະເນື່ອງມາຈາກຄົວເຮືອນ ທີ່ມີຈຳນວນແຮງງານຫຼັກໃນຄົວເຮືອນຫຼາຍ ເຊິ່ງໃນນັ້ນມີຈຳນວນຄົນທີ່ເປັນກຳລັງແຮງງານເພື່ອຈະສ້າງລາຍໄດ້ໃຫ້ແກ່ຄອບຄົວ ເພີ່ມຂຶ້ນຫຼາຍກ່ວາ ຄົວເຮືອນທີ່ມີແຮງງານຫຼັກໜ້ອຍ. ເນື້ອທີ່ດິນໃນການເຮັດກະສິກຳ (Area): ມີການພົວພັນກັນໃນທິດທາງດຽວກັນກັບລາຍໄດ້ຂອງຄົວເຮືອນ ເຊິ່ງເປັນໄປຕາມສົມມຸດຖານທີ່ວາງໄວ້ ດ້ວຍລະດັບຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 95% ໝາຍຄວາມວ່າ: ເມື່ອຄົວເຮືອນໃດມີເນື້ອທີ່ດິນໃນການເຮັດກະສິກຳເພີ່ມຂຶ້ນ 1 ເຮັກຕາ ຈະເຮັດໃຫ້ມີລາຍໄດ້ຂອງຄົວເຮືອນເພີ່ມຂຶ້ນເທົ່າກັບ 0.1988 ຫຼື 19.88 % ອາດເນື່ອງມາຈາກເຂົາເຈົ້າມີທີ່ດິນໃນການເຮັດກະສິກຳເພີ່ມຂຶ້ນ ເຮັດໃຫ້ສາມາດທຳການຜະລິດກະສິກຳຫຼາຍຂຶ້ນສາມາດສ້າງລາຍໄດ້ຂອງຄົວເຮືອນຫຼາຍກ່ວາຄົວເຮືອນທີ່ມີເນື້ອທີ່ດິນໃນການເຮັດກະສິກຳໜ້ອຍກ່ວາ. ຈຳນວນແຮງງານຈ້າງໃນການຜະລິດກະສິກຳ (PL): ມີການພົວພັນກັນໃນທິດທາງດຽວກັນກັບລາຍໄດ້ຂອງຄົວເຮືອນ ເຊິ່ງເປັນໄປຕາມສົມມຸດຖານທີ່ວາງໄວ້ ດ້ວຍລະດັບຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 99% ໝາຍຄວາມວ່າ: ເມື່ອຈຳນວນແຮງງານຈ້າງໃນການຜະລິດກະສິກຳ ໃນຄົວເຮືອນທັງໝົດເພີ່ມຂຶ້ນ 1 ຄົນ ຈະເຮັດໃຫ້ລາຍໄດ້ຂອງຄົວເຮືອນເພີ່ມຂຶ້ນ 0.0064 ຫຼື 0.064 % ອາດຈະເນື່ອງມາຈາກຄົວເຮືອນ ທີ່ໃຊ້ຈຳນວນແຮງງານຈ້າງໃນການຜະລິດກະສິກຳ ໃນຄົວເຮືອນຫຼາຍ ເຊິ່ງໃນນັ້ນມີຈຳນວນຄົນທີ່ເປັນກຳລັງແຮງງານເພື່ອຈະສ້າງລາຍໄດ້ໃຫ້ແກ່ຄອບຄົວ ເພີ່ມຂຶ້ນຫຼາຍກ່ວາ ຄົວເຮືອນທີ່ບໍ່ໄດ້ຈ້າງແຮງງານເຂົ້າໃນການຜະລິດ. ຄົວເຮືອນທີ່ລ້ຽງສັດ (ງົວ, ຄວາຍ, ແບ້, ໝູ) (Cattle): ມີການພົວພັນກັນໃນທິດທາງດຽວກັນກັບລາຍໄດ້ຂອງຄົວເຮືອນ ເຊິ່ງເປັນໄປຕາມສົມມຸດຖານທີ່ວາງໄວ້ ແຕ່ຜ່ານການທົດສອບທາງສະຖິຕິ ດ້ວຍລະດັບຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 99% ໝາຍຄວາມວ່າ: ເມື່ອຄົວເຮືອນທີ່ລ້ຽງສັດ(ງົວ,ແບ້,ໝູ) ຈະເຮັດໃຫ້ລາຍໄດ້ຂອງຄົວເຮືອນເພີ່ມຂຶ້ນ 0.5445 ຫຼື 54.45 % ອາດຈະເນື່ອງວ່າ ການທີ່ຄົວເຮືອນທີ່ລ້ຽງສັດ(ງົວ,ແບ້,ໝູ) ອາດເຮັດໃຫ້ເຂົາເຈົ້າ ມີລາຍໄດ້ຂອງຄົວເຮືອນທີ່ບໍ່ໄດ້ລ້ຽງສັດ ເພາະການລ້ຽງສັດປະເພດນີ້ມັນເປັນທີ່ຕ້ອງການຂອງຕະຫຼາດ ແລະ ສ້າງລາຍໄດ້ໄດ້ດີ. ຄົວເຮືອນທີ່ລ້ຽງສັດປີກ (wide): ມີການພົວພັນກັນໃນທິດທາງດຽວກັນກັບລາຍໄດ້ຂອງຄົວເຮືອນ ເຊິ່ງເປັນໄປຕາມສົມມຸດຖານທີ່ວາງໄວ້ ແຕ່ຜ່ານການທົດສອບທາງສະຖິຕິ ດ້ວຍລະດັບຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 99% ໝາຍຄວາມວ່າ: ເມື່ອຄົວເຮືອນທີ່ລ້ຽງສັດປີກ ຈະເຮັດໃຫ້ລາຍໄດ້ຂອງຄົວເຮືອນເພີ່ມຂຶ້ນ 0.1163 ຫຼື 11.63 % ອາດຈະເນື່ອງວ່າ ການທີ່ຄົວເຮືອນທີ່ລ້ຽງສັດປີກ ອາດເຮັດໃຫ້ເຂົາເຈົ້າ ມີລາຍໄດ້ຂອງຄົວເຮືອນຫຼາຍກວ່າ ຄົວ

ເຮືອນທີ່ບໍ່ໄດ້ລ້ຽງສັດ ເພາະການລ້ຽງສັດປະເພດນີ້ມັນເປັນທີ່ຕ້ອງການຂອງຕະຫຼາດ,ສ້າງລາຍໄດ້ໄດ້ດີ ແລະ ຕົ້ນທຶນຕໍ່າ.

ຄົວເຮືອນທີ່ປູກພືດ (Crop): ມີການພົວພັນກັນໃນທິດທາງດຽວກັນກັບລາຍໄດ້ຂອງຄົວເຮືອນ ເຊິ່ງເປັນໄປຕາມສົມມຸດຖານທີ່ວາງໄວ້ ແຕ່ຜ່ານການທົດສອບທາງສະຖິຕິ ດ້ວຍລະດັບຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 99% ໝາຍຄວາມວ່າ: ເມື່ອຄົວເຮືອນທີ່ປູກພືດ ຈະເຮັດໃຫ້ລາຍໄດ້ຂອງຄົວເຮືອນເພີ່ມຂຶ້ນ 0.2626 ຫຼື 26.26 % ອາດຈະເນື່ອງວ່າການທີ່ຄົວເຮືອນທີ່ປູກພືດ ອາດເຮັດໃຫ້ເຂົາເຈົ້າ ມີລາຍໄດ້ຂອງຄົວເຮືອນຫຼາຍກວ່າ ຄົວເຮືອນທີ່ບໍ່ປູກພືດ ເພາະການປູກພືດສະໜອງຕະຫຼາດນີ້ມັນເປັນທີ່ຕ້ອງການຂອງຕະຫຼາດ,ສ້າງລາຍໄດ້ໄດ້ດີ ແລະ ຕົ້ນທຶນຕໍ່າ. ທຸລະກິດຂອງຄົວເຮືອນ (Bus): ມີການພົວພັນກັນໃນທິດທາງດຽວກັນກັບລາຍໄດ້ຂອງຄົວເຮືອນ ເຊິ່ງເປັນໄປຕາມສົມມຸດຖານທີ່ວາງໄວ້ ດ້ວຍລະດັບຄວາມເຊື່ອໝັ້ນທາງສະຖິຕິໃນລະດັບຕໍ່າກວ່າ 90% ໝາຍຄວາມວ່າ: ຄົວເຮືອນໃດຫາກມີທຸລະກິດກໍ່ຈະບໍ່ສາມາດສ້າງລາຍໄດ້ຂອງຄົວເຮືອນ ສູງກ່ວາຄົວເຮືອນທີ່ບໍ່ມີທຸລະກິດຂອງຄົວເຮືອນ.

### 6. ສະຫຼຸບຜົນ

ໃນການສຳຫຼວດຄັ້ງນີ້ໄດ້ໃຊ້ຕົວຢ່າງຈຳນວນ 425 ຄົວເຮືອນ ໃນນັ້ນເຫັນວ່າສ່ວນໃຫຍ່ ຈາກການສຶກສາເຫັນວ່າ ຫົວໜ້າຄົວເຮືອນທີ່ເປັນຕົວຢ່າງອສ່ວນໃຫຍ່ແມ່ນເພດຊາຍ ເຊິ່ງມີຈຳນວນ 310 ຄົວເຮືອນ ກວມເອົາ 72.94 ສ່ວນຮ້ອຍ, ມີອາຍຸລະຫວ່າງ 37-47 ປີ ມີຈຳນວນ 177 ຄົວເຮືອນ ກວມເອົາ 41.65 ສ່ວນຮ້ອຍ, ຮອງລົງມາແມ່ນມີອາຍຸລະຫວ່າງ 48-58 ປີ ມີຈຳນວນ 128 ຄົວເຮືອນ ກວມເອົາ 30.12 ສ່ວນຮ້ອຍ, ຫົວໜ້າຄົວເຮືອນຕົວຢ່າງສ່ວນຫຼາຍແມ່ນຮຽນຈົບປະຖົມ ໂດຍມີຈຳນວນ 210 ຄົວເຮືອນ ກວມເອົາ 49.41 ສ່ວນຮ້ອຍ, ຮອງລົງມາແມ່ນບໍ່ໄດ້ຮຽນ ມີຈຳນວນ 94 ຄົວເຮືອນ ກວມເອົາ 22.12 ສ່ວນຮ້ອຍ, ມີລະດັບການສຶກສາສູງສຸດແມ່ນຮຽນ ມັດທະຍົມຕອນຕົ້ນ ແລະ ຈົບປະຖົມ ແລະ ໂດຍມີຈຳນວນ 189 ຄົວເຮືອນ ກວມເອົາ 44.47 ສ່ວນຮ້ອຍ, ມີຈຳນວນຄົນໃນຄົວເຮືອນທັງໝົດຢູ່ລະຫວ່າງ 5-6 ຄົນ ມີຈຳນວນ 164 ຄົວເຮືອນ ກວມເອົາເຖິງ 38.59 ສ່ວນຮ້ອຍ, ຮອງລົງມາແມ່ນຢູ່ລະຫວ່າງ 3-4 ຄົນ ມີຈຳນວນ 121 ຄົວເຮືອນ ກວມເອົາເຖິງ 28.47 ສ່ວນຮ້ອຍ, ໃນນັ້ນ, ສ່ວນໃຫຍ່ມີສະມາຊິກທີ່ສາມາດຫາລາຍໄດ້ຊ່ວຍຄົວເຮືອນໄດ້ພຽງແຕ່ປະມານ 1-2 ຄົນ ມີຈຳນວນ 301 ຄົວເຮືອນ ກວມເອົາ 70.82 ສ່ວນຮ້ອຍ, ຮອງລົງມາແມ່ນມີຈຳນວນແຮງງານ 3-4 ຄົນ ມີຈຳນວນ 107 ຄົວເຮືອນ ກວມເອົາ 25.18 ສ່ວນຮ້ອຍ, ເນື້ອທີ່ການເຮັດກະສິກຳສ່ວນໃຫຍ່ຂອງຊາວກະສິກອນໃນເຂດບ້ານສະແຄະ ແມ່ນມີບໍ່ຄ່ອຍຫຼາຍປານໃດ ເຊິ່ງມີເນື້ອທີ່ການເຮັດກະສິກຳປະມານ 1.01-2.00 ເຮັກຕາ ມີຈຳນວນ 174 ຄົວເຮືອນ ກວມເອົາ 40.94 ສ່ວນຮ້ອຍ, ຮອງລົງມາແມ່ນມີເນື້ອທີ່ການເຮັດກະສິກຳຕໍ່າກວ່າ 2.01-3.00 ເຮັກຕາ ມີຈຳນວນ 135 ຄົວເຮືອນ ກວມເອົາ 31.76 ສ່ວນຮ້ອຍ, ດ້ານທຸລະກິດຂອງຄົວເຮືອນຊາວກະສິກອນພົບວ່າຄົວເຮືອນທີ່ມີທຸລະກິດ ມີຈຳນວນ 71 ຄົວເຮືອນ ກວມເອົາ 16.71 ສ່ວນຮ້ອຍ, ຄົວເຮືອນທີ່ໄດ້ຮັບການຝຶກອົບຮົມຈາກໂຄງການຂອງລັດຖະບານ ຫຼື ໜ່ວຍງານອື່ນໆທີ່ຈັດຕັ້ງຂຶ້ນ ເຫັນວ່າຄົວເຮືອນສ່ວນໃຫຍ່ແມ່ນບໍ່ໄດ້ຮັບການຝຶກອົບຮົມຈັກຄັ້ງເລີຍ ມີຈຳນວນ 175 ຄົວເຮືອນ ກວມເອົາ 41.18 ສ່ວນຮ້ອຍ, ມີລາຍໄດ້ຂອງຄົວເຮືອນຕໍ່ປີຢູ່ລະຫວ່າງ 20,000,001-30,000,000 ກີບ ເຊິ່ງມີຈຳນວນ 144 ຄົວເຮືອນ ກວມເອົາ 33.88 ສ່ວນຮ້ອຍ, ຮອງ

ລົງມາແມ່ນມີລາຍໄດ້ຂອງຄົວເຮືອນຢູ່ລະຫວ່າງ 30,000,001-40,000,000 ກີບຕໍ່ປີ ມີຈຳນວນ 129 ຄົວເຮືອນ ກວມເອົາ 30.35 ສ່ວນຮ້ອຍ.

**7. ຄວາມຮູ້ບຸນຄຸນ**

ພວກຂ້າພະເຈົ້າໃນນາມນັກສຶກສາປະລິນຍາໂທ ຄະນະເສດຖະສາດ ແລະ ການຄຸ້ມຄອງ, ພາກວິຊາເສດຖະສາດ ສາຂາ ເສດຖະສາດການພັດທະນາແບບຍືນຍົງ ໄດ້ມີຄວາມພາກພູມໃຈເປັນຢ່າງຍິ່ງທີ່ໄດ້ສຶກສາຢູ່ສະຖານທີ່ແຫ່ງນີ້, ພວກຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນ ແລະ ເຄົາລົບນັບຖືຢ່າງສູງມາຍັງອະທິການບໍດີ ແລະ ຄູອາຈານ ມະຫາວິທະຍາໄລຈຳປາສັກ ຄະນະເສດຖະສາດ ແລະ ການຄຸ້ມຄອງ ທີ່ໄດ້ໃຫ້ໂອກາດພວກຂ້າພະເຈົ້າໄດ້ສຶກສາຮ່ຳຮຽນເກັບກ່ຽວປະສົບການເປັນເວລາ 2 ປີ ແລະ ຂໍສະແດງຄວາມຮູ້ບຸນຄຸນຢ່າງສຸດຊຶ້ງອີກເທື່ອໜຶ່ງມາຍັງອາຈານ ຂັນທະລີ ພົມມະເສນ ເຊິ່ງເປັນອາຈານທີ່ປຶກສາ ແລະ ໄດ້ໃຫ້ຄຳແນະນຳທີ່ດີໃຫ້ແກ່ພວກຂ້າພະເຈົ້າ ເຊິ່ງສາມາດນຳມາໃຊ້ໃນການຂຽນບົດໂຄງການຈົບຊັ້ນໃນຄັ້ງນີ້ຈົນສຳເລັດຜົນຢ່າງສົມບູນ.

ຂໍສະແດງຄວາມຮູ້ບຸນຄຸນ ແລະ ເຄົາລົບນັບຖືຢ່າງສູງມາຍັງຄູອານໝົດທຸກຄົນທີ່ໄດ້ສິດສອນ ແລະ ຖ່າຍທອດວິຊາຄວາມຮູ້ໃຫ້ແກ່ພວກຂ້າພະເຈົ້າ ບໍ່ວ່າຈະເປັນດ້ານເອກະສານ, ຂໍ້ມູນ ແລະ ໃຫ້ຄຳແນະນຳ-ຊີ້ແນະແນວທາງຕະຫຼອດມາຈົນມາເຖິງຈຸດນີ້ໄດ້. ພວກຂ້າພະເຈົ້າຂໍຢັ້ງຢືນວ່າຈະນຳເອົາບົດຮຽນ ແລະ ວິຊາຄວາມຮູ້ທີ່ມີໄປນຳໃຊ້ຜັນຂະຫຍາຍໃຫ້ເກີດປະໂຫຍດແກ່ຕົນເອງ ແລະ ສັງຄົມໃຫ້ດີທີ່ສຸດ. ຂໍສະແດງຄວາມຂອບໃຈ ມາຍັງຄະນະກຳມະການປ້ອງກັນບົດຈົບຊັ້ນທຸກໆທ່ານ ທີ່ໄດ້ປະກອບຄວາມຄິດຄຳເຫັນ, ຄຳຕຳນິຕິຊົມ ແລະ ຄຳແນະນຳວິທີການຂຽນບົດເພື່ອເປັນແນວທາງດຳເນີນການແກ້ໄຂຕໍ່ໄປໃຫ້ສຳເລັດຜົນ. ຂໍຂອບໃຈ ສຳລັບພາກສ່ວນສຳນັກງານ, ຫ້ອງການ, ອົງການຈັດຕັ້ງຂັ້ນບ້ານທີ່ກ່ຽວຂ້ອງ ແລະ ຊາວກະສິກອນຜູ້ຕອບແບບສອບຖາມທີ່ໄດ້ໃຫ້ຄວາມຮ່ວມມືເປັນຢ່າງດີ ເຮັດໃຫ້ການສຶກສາຄົ້ນຄ້ວາຄັ້ງນີ້ຕອບສະໜອງຕາມຈຸດປະສົງທີ່ວາງໄວ້. ນອກນີ້, ຂໍຂອບໃຈ ມາຍັງພໍ່, ແມ່, ອ້າຍ, ເອື້ອຍ, ນ້ອງ ທຸກຄົນທີ່ໄດ້ໃຫ້ການຊ່ວຍເຫຼືອສົ່ງເສີມຢ່າງເຕັມທີ່ໃນການສຶກສາຮ່ຳຮຽນຕະຫຼອດມາ ແລະ ຂອບໃຈມາຍັງໝູ່ເພື່ອນນັກສຶກສາດ້ວຍກັນທີ່ໄດ້ໃຫ້ກຳລັງໃຈ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນສະເໝີມາ ທ້າຍສຸດນີ້ ຂໍອວຍພອນໄຊອັນປະເສີດມາຍັງບັນດາທ່ານ ຈົ່ງມີແຕ່ຄວາມສຸກກາຍສະບາຍໃຈ, ສົມຫວັງໃນໜ້າທີ່ການງານ, ປາສະຈາກໂລກໄພໄຂ້ເຈັບ, ມີສຸຂະພາບແຂງແຮງ, ປາຖະໜາສິ່ງໃດຂໍໃຫ້ໄດ້ດ້ວຍໃຈປາຖະໜາດ້ວຍເຖີດ.

**8. ເອກະສານອ້າງອີງ**

ເກວະລີ ພຸດຈີນ .(2009). ປັດໄຈທີ່ມີຜົນກະທົບຕໍ່ລາຍໄດ້ຂອງຄົວເຮືອນລະຫວ່າງຂະແໜງກະສິກຳ ແລະ ນອກຂະແໜງກະສິກຳໃນ ອຳເພີເມືອງ ຈັງຫວັດຊຽງໃໝ່

ສະຖາບັນຝຶກອົບຮົມສະຫະກອນການກະເສດແຫ່ງຊາດ. (2526). ການບໍລິຫານສິນເຊື່ອການກະເສດຂອງທະນາຄານພານິດ. ທະນະຄານພານິດ:ປະເທດໄທ.

ສຳນັກງານຄະນະກຳມະການພັດທະນາເສດຖະກິດແລະສັງຄົມແຫ່ງຊາດ. (2001). “ລາຍງານສະຖານະການຄວາມທຸກຈົນແລະຄວາມເຫຼື່ອລ້ຳໃນປະເທດໄທ ປີ 2000”.

ສົມນຶກ ປອດທອງ .(2003). ປັດໄຈທີ່ມີຜົນຕໍ່ການຕັດສິນໃຈຂອງຊາວກະສິກອນໃນການປູກໝາກນາວ ໃນຈັງຫວັດພິຈິດ. ສູນວິໄຈພັນພືດສອນພິຈິດ, ສຳນັກງານວິໄຈ ແລະ

ພັດທະນາການກະເສດເຂດ 2 ກົມວິຊາການ ກະເສດ.

ດານີ ພຸດວິບູນ (2000). ການຈັດການສິນເຊື່ອ (ການເງິນການທະນາຄານ). ຈຸລາລົງກອນ ມະຫາວິທະຍາໄລ:ປະເທດໄທ.

ປາວີນາ ໄຊຍະລາດ ແລະ ນິກາຈິນດາ ຈັນວັນເພັງ. (2017). ບົດບາດຂອງໂຄງການກະສິກຳປູກ ມັນຕົ້ນແບບ

ມີສັນຍາຕໍ່ກັບການຫຼຸດຜ່ອນຄວາມທຸກຍາກ ແລະ ການກະຈາຍລາຍໄດ້ ຂອງຊາວກະສິກອນຢູ່ ເມືອງບາຈຽງ ຈະເລີນສຸກ ແຂວງຈຳປາສັກ (ບົດຈົບຊັ້ນປະລິນຍາຕີ). ພາກວິຊາ ເສດຖະສາດແລະ ການຄຸ້ມຄອງ: ມະຫາວິທະຍາໄລຈຳປາສັກ.

ເພັດປຣະເສີດ, ໜ. (2001). ສະຫວັດດີການພາກ ຊຸມຊົນ:ກຸ່ມອອມສິນ. ສຳນັກງານກອງທຶນ ສະໜັບສະໜູນການວິໃຈກຸງເທບມະຫາ ນະຄອນ: ປະເທດໄທ.

ຫ້ອງວ່າການປົກຄອງແຂວງຈຳປາສັກ. (2017). “ບັນຊີບ້ານໃນແຂວງຈາປາສັກ ປະຈາປີ 2016”. ປາກເຊ: ແຂວງ ຈຳປາສັກ ສ ປປ ລາວ.

ລັດຖະບານແຫ່ງ ສ ປ ປ ລາວ. (2012). ດຳລັດວ່າ ດ້ວຍ ມາດຕະຖານຄວາມທຸກຍາກ ແລະ ມາດຕະຖານການພັດທະນາໄລຍະ 2012-2015 (ເລກທີ 201/ລບ). ສະພະແຫ່ງຊາດ: ນະຄອນຫຼວງວຽງຈັ

ອາລີວັນ ສີຊານົນ (2016). ສຶກສາປັດໃຈທີ່ມີຜົນຕໍ່ ຄວາມທຸກຍາກໃນ ສປປລາວ ໂດຍນຳໃຊ້ ວິທີວັດແທກ

ດັດສະນີຄວາມທຸກຍາກຫຼາຍມິຕິ (ບົດຈົບຊັ້ນປະ ບິນຍາຕີ). ຄະນະເສດຖະສາດ ແລະບໍລິຫານ ທຸລະກິດ:ມະຫາວິທະຍາໄລແຫ່ງຊາດ

Ahmad Z,.(2013). ໄດ້ສຶກສາເຖິງປັດໄຈທີ່ເປັນ ຕົວກຳນົດລາຍໄດ້ຄົວເຮືອນຂອງຊາວ ກະສິກອນໃນ ພື້ນທີ່ຊົນລະປະທານມູດາ ປະເທດ ມາເລເຊຍ

Australian government department of foreign Affairs and trade. Overveiw of australia’s aid program to laos.http://dfat.gov.au/geo/laos/developmentassistance/Pages/development-assistance-in-laos.aspx

Coleman, B. E. (1999). The Impact of group lending in Northeast Thailand. Journal of development Economics.

Jahangir, A. (1997). Impact of smallholder livestock development project in some selected areas of rural Bangladesh. Livestock for rural Development .

Jahnangir Alam chowdhury, D. G. (2002). The Impact of Micro-credit on poverty: Evidence from bangladesh .

Keynes, J. M. (1936). The General Theory of Enployment, interest and Money. United kingdom: Palgrave Macmillan.

Mahajan, A. (2014). Datt & Sundharam Indian Economy.

Mahjabeen, R. (2008). Microfinancing in bangladesh: Impact on Hoseholds, consumption and Welfare. Journal of Policy Modeling.

Md Rezaul karim, S. T. (2012). Role of Micro-credit in Poverty Alleviation of Rural poor: Evidence from LAxipur District of Bangladesh. Journal of business and Technology (Dhaka), 37-55.

Mohummed Shifi Ulah Mazumder, L. W. (2013). Micro-credit and poverty reduction: A case of Bangladesh. Prague Economic.

Murinde, M. Q. (2005). Access to Credit and Housesold Poverty Reduction in Rural Veitnam: A Cross-Sectional Study.

Wossen, T. et al. (2017). Impacts of Extension Access and Cooperative Membership on Technology Adoption and Household Welfare. Journal of Rural Studies, 54, 223-233.

Pitt, M. M. (1998). The Impact of group-based Credit programs on Poor Households in Bangladesh: Does the gender of participaint Matter? Journal of political, 985-996.

Sadegh, B. (2006). Microfinance And Poverty Reduction: Some International Evidence. International Business & Economic Reseach Journal.

sayvaya, I. (2012). Does Microfinance Reduce Poverty in Laos PDR? Case study of village Development Funds (VDFs) at Sukuma District Champasak Province, Lao PDR.

Senait, H. M. (2012). Impact of Goat Development Project on Livelihood Assets: the case of northern Red sea Region in Eritrea. Specialization in Rural Development and Food security.

Tefera, T. (2002). Improving Women Farmers' Welfare through a Goat Credit Project and Its Implication For Promoting Food Security and Rural Livelihoods. Journal of rural and Community Development, 12-13.

Tran Thi Giang, G. W. (2015). Impact of credit on poor Household's Income: Evidence from rural Areas of veitnam. Journal of Finance and Economics, pp 29-35.

Waheed, S. (2009). Does Rural Micro credit Improve Well-being of borrowers in the Punjab(Pakistan. Pakistan Economic and Social Reveiw.

World bank. (2001). Engendering Development: Through Gender Equality in Rights, Resources, and voice. Washington, D.C.: World Bank Publications.

Yamane, T. (1997). Statistics, an intoduactory Analysiss 2nd Edition: Horper and Row. New York.

https://moneyhub.in.th/article/agriculture-loan/http://www.econ.mju.ac.th/pimpimon/index.php?option=com_doc

man&task=doc_download&gid=28
&Itemid=2.